## VI.ຂໍ້ສະເໜີ

1.ສະເໜີຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຊ່ວຍເຫຼືອໃນການຊອກແຫຼ່ງທຶນເພື່ອສ້າງກຸ່ມການລ້ຽງໝູໃຫ້ເປັນບ້ານແບບຢ່າງຂອງເມືອງ, ຂໍແນວພັນໝູມາປະສົມພັນເພື່ອປັບປຸງພັນ ແລະ ຈັດສະຖານທີ່ ທີ່ເໝາະສົມໃນການລ້ຽງໝູດ້ວຍ.

2.ສະເໜີວິຊາການທາງດ້ານການລ້ຽງສັດມາຈັດຝຶກອົບຮົມກ່ຽວກັບການຈັດການ ແລະ ດູແລຮັກສາສຸຂະພາບສັດ (ສັກຢາປົວພະຍາດ ແລະ ສັກວັກຊີນປ້ອງກັນພະຍາດ)

3.ສະເໜີໃຫ້ຫ້ອງການອຸດສາຫະກຳ-ການຄ້າເມືອງ ຊ່ວຍຄວບຄຸມທາງດ້ານລາຄາໃຫ້ເປັນປົກກະຕິ

4.ສະເໜີໃຫ້ບໍລິສັດຊີພີ ມາຊ່ວຍໃນການສ້າງລະບົບຄອກໃຫ້ໄດ້ມາດຕະຖານ

5.ສະເໜີບໍລິສັດໄຟຟ້າເຂື່ອນນ້ຳອູ1 ສະໜອງທາງດ້ານງົບປະມານເຂົ້າຮ່ວມກິດຈະກຳການລ້ຽງໝູເປັນສິນຄ້າດ້ວຍ.





## VII. ລາຍຊື່ນັກຄົ້ນຄວ້າທັງໝົດ

ບົດນີ້ແມ່ນໄດ້ຮັບການເກັບຂໍ້ມູນຈາກແບບຟອມສອບຖາມຈຳນວນ 34 ຄອບຄົວ ເຊິ່ງມີລາຍຊື່ດັ່ງນີ້:

1.ທ້າວ ມິດ ໄຊວັນດີ
2.ນາງ ເຖົາ ຮຸ່ງມະນີວັນ
3.ທ້າວ ຄຳດາ ພົງພະສິດ
4.ນາງ ສຸມາລີ ນິດທະວົງ
5.ທ້າວ ອຳພອນ ວິໄລວັນ
6.ນາງ ແສງນິນ ອິນທະແສງ
7.ທ້າວ ຕຸ້ຍ ໄຊຍະລາດ
8.ທ້າວ ຕາຄຳ ແກ້ວປັນຍາ
9.ທ້າວ ໃຈເພັດ ວັນວິໄລ
10.ທ້າວ ປັນ ແສງມະນີ
11.ທ້າວ ບຸນ ຍອດປະເສີດ
12.ທ້າວ ເພັດ
13.ນາງ ຄານ ວິໄລພອນ
14.ນາງ ດີ ຄຳມະນີ
15.ທ້າວ ວຽງ
16.ນາງ ພິມ
17.ທ້າວ ບັນດິດ ມິດບົວພອນ
18.ນາງ ຫຼ້າ
19.ນາງ ຈັນທີ ວິໄລກອນ
20.ທ້າວ ເຄືອຫຼົ່
21.ນາງ ພິລາ
22.ນາງ ດຽວ ຈັນມະນີວົງ
23.ທ້າວ ໄມ່ແສງ ບຸນອຸທິດ
24.ທ້າວ ຄຳເສົາ
25.ທ້າວ ຟູ ມິດປັນຍາ
26.ນາງ ມະນີ ຍອດດວງຈັນ
27.ນາງ ດອນ
28.ທ້າວ ສົມອົກ ມິດຕະຟອງ
29.ນາງ ຈັນແສງ
30.ທ້າວ ຄຳເຄືອ ຈັນທະເກດ
31.ທ້າວ ທົງຄຳ ສິດທະວົງ
32.ທ້າວ ໄມ່ໜົ່
33.ທ້າວ ກຸ ສີສະຫວັນ
34.ທ້າວ ໄມ່ດອນ



# ໂຄງການສົ່ງເສີມຊາວບ້ານ ເຮັດການຄົ້ນຄວ້າ

ຫົວຂໍ້: ການລ້ຽງໝູເປັນສິນຄ້າ ຂອງປະຊາຊົນ

ບ້ານຄອນຄຳ ເມືອງປາກອູ

ຜະລິດໂດຍ:

ສະໜັບສະໜູນໂດຍ:

OXFAM

## I.ປະຫວັດຄວາມເປັນມາຂອງບ້ານຄອນຄຳ ເມືອງປາກອູ ແຂວງຫຼວງພະບາງ

ບ້ານ ຄອນຄຳ ເປັນບ້ານໜຶ່ງທີ່ຂຶ້ນກັບເມືອງປາກອູ ແຂວງຫຼວງພະບາງ, ຊຶ່ງໄດ້ສ້າງຕັ້ງເປັນບ້ານມາແຕ່ປີ 1975 ຈົນຮອດ ປັດຈຸບັນ ທີ່ຢູ່ລຽບຕາມແຄມແມ່ນ້ຳອູ ແລະ ແຄມເສັ້ນທາງຫຼວງເລກທີ 13 ເໜືອ, ທິດເໜືອຕິດກັບບ້ານຫວ້ຍໂລ ທິດໃຕ້ຕິດກັບບ້ານຜາທຶງ ທິດຕາເວັນອອກຕິດກັບບ້ານຫວ້ຍໂອດ ແລະ ທິດຕາເວັນຕົກຕິດກັບພູຊາ ມີຄອບຄົວທັງໝົດ 107 ຄອບຄົວ, ມີພົນລະເມືອງ 538 ຄົນ, ຍິງ 277 ຄົນ, ປະກອບມີ 1 ເຜົ່າຄື: ຊົນເຜົ່າລື້ ປະຊາຊົນສ່ວນໃຫຍ່ມີອາຊີບ ເຮັດການກະສິກຳ ເປັນຕົ້ນແມ່ນ ເຮັດນາ, ເຮັດສວນ, ລ້ຽງສັດ, ຫາປາ ແລະ ຄ້າຂາຍ.




ປະຫວັດຄວາມເປັນມາຂອງການລ້ຽງໝູຂອງປະຊາຊົນບ້ານຄອນຄຳ
ເມືອງປາກອູ ແຂວງຫຼວງພະບາງ

ການລ້ຽງໝູຂອງປະຊາຊົນ ແມ່ນເລີ່ມມາໄດ້ຫຼາຍກວ່າ 10 ປີແລ້ວ ເຊິ່ງໄດ້ຮັບຄວາມຮູ້ດ້ານການລ້ຽງມາຈາກການສືບທອດຈາກຄົນໃນຄອບຄົວຮຸ່ນກ່ອນ ພັນໝູທີ່ລ້ຽງສ່ວນຫຼາຍແມ່ນພັນພື້ນເມືອງ (ໝູລາດ) ແລະ ຄອບຄົວໜຶ່ງແມ່ນລ້ຽງ 3-10 ໂຕຂຶ້ນໄປຕໍ່ຄອບຄົວ.



## II.ຄວາມສຳຄັນຂອງການລ້ຽງໝູ

ການລ້ຽງໝູແມ່ນມີຄວາມສຳຄັນຫຼາຍຕໍ່ຄອບຄົວເຊັ່ນ: ລ້ຽງເພື່ອຂາຍເປັນສິນຄ້າ, ສ້າງລາຍຮັບໃຫ້ແກ່ຄອບຄົວປະມານ 6-20 ລ້ານກີບຕໍ່ປີ, ລ້ຽງເພື່ອເປັນອາຫານໃນງານບຸນປະເພນີຕ່າງໆຂອງບ້ານ ແລະ ນອກຈາກນັ້ນຍັງໃຊ້ໝູເຂົ້າໃນການເຮັດພິທີຕ່າງໆຕາມຮີດຄອງປະເພນີຂອງບ້ານ.



## III.ວິທີການລ້ຽງໝູຂອງປະຊາຊົນບ້ານຄອນຄຳ

ການລ້ຽງໝູຂອງບ້ານຄອນຄຳ ແມ່ນລ້ຽງຕາມທຳມະຊາດ ແບບຂັງທີ່ອ້ອມດ້ວຍໄມ້, ເກືອດ້ວຍຮຳ ຫຼື ຮຳປະສົມພືດທີ່ມີຕາມທ້ອງຖິ່ນທີ່ຫາໄດ້ຕາມທຳມະຊາດ ໂດຍເກືອ 2 ຄັ້ງຕໍ່ມື້, ໄດ້ມີການຈັດການທາງດ້ານສຸຂະພາບສັດ ແມ່ນໄດ້ສັກວັກຊີນ (ຢາປ້ອງກັນພະຍາດ) ເປັນປົກກະຕິ ແລະ ສາມາດປິ່ນປົວສັດເມື່ອເປັນພະຍາດຂັ້ນເບົາບາງ. ເຊິ່ງການລ້ຽງໝູແມ່ນໃຊ້ເວລາໃນການລ້ຽງ 5-6 ເດືອນ ຈຶ່ງສາມາດຂາຍ ປັດຈຸບັນການລ້ຽງໝູຂອງບ້ານເຮົາແມ່ນລ້ຽງເພື່ອຂາຍເປັນສ່ວນໃຫຍ່ ໃນການຂາຍແມ່ນຂາຍໃຫ້ພໍ່ຄ້າທີ່ມາຊື້ຕາມບ້ານ ຮູບແບບໃນການການຂາຍແມ່ນຂາຍເປັນໂຕຊັ່ງເປັນກິໂລດິບ

## IV.ບັນຫາ

- ➤ ຂາດເຕັກນິກການລ້ຽງໝູ ແລະ ການຈັດການທາງດ້ານສຸຂະພາບເຮັດໃຫ້ໝູຈະເລີນເຕີບໂຕຊ້າ
- ➤ ຂາດແຫຼ່ງທຶນມາສະໜັບສະໜູນໃນການລ້ຽງໝູເພື່ອຊື້ອາຫານທີ່ດີໃຫ້ໝູກິນ
- ➤ ຂາດພໍ່ພັນ-ແມ່ພັນໝູເພື່ອມາປັບປຸງແນວພັນດັ່ງເດີມ
  ສະຖານໃນການລ້ຽງໝູແມ່ນຫຍັງຄັບແຄບເຮັດໃຫ້ຍັງບໍ່ສາມາດລ້ຽງຂາຍເປັນສິນຄ້າໄດ້ເຕັມຮູບແບບ
- ➤ ຂາດເຕັກນິກການສ້າງລະບົບຄອກທີ່ໄດ້ມາດຕະຖານ



## V.ວິທີການແກ້ໄຂ

- ➤ ຂຽນໂຄງການຝຶກອົບຮົມການລ້ຽງໝູ ຫຼື ໄປທັດສະນະ (ເບິ່ງງານ) ເບິ່ງບ່ອນທີ່ລ້ຽງໝູປະສົບຜົນສຳເລັດຜ່ານມາ
- ➤ ຊອກແຫຼ່ງທຶນມາສະໜັບສະໜູນ ການລ້ຽງໝູເພື່ອໃຫ້ເປັນບ້ານຕົວແບບຂອງເມືອງປາກອູ
- ➤ ຂໍແນວພັນໝູທີ່ລ້ຽງໃຫຍ່ໄວຈາກໂຄງການມາປະສົມພັນ
- ➤ ຂໍສະຖານທີນຳອຳນາດການຈັດຕັ້ງບ້ານ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ ເພື່ອຈັດສັນສະຖານທີໃຫ້
- ➤ ຊອກແຫຼ່ງທຶນມາສະໜັບສະໜູນໃນການ ສ້າງຄອກໃຫ້ໄດ້ມາດຕະຖານ ແລະ ທົນທານຕໍ່ສະພາບແວດລ້ອມ



